## 1. ພະຍາດກາຝາກພາຍໃນຂອງໝູ

ໝູສາມາດຕິດພະຍາດກາຝາກ ຊະນິດໂຕກົມຫຼາຍຊະນິດ ຊຶ່ງພະຍາດດັ່ງກ່າວຈະເຮັດໃຫ້ໝູໃຫຍ່ມີອັດຕາການຈະເລີນເຕີບຕ່ຳ ແລະຈະເຮັດໃຫ້ໝູນ້ອຍຖອກທ້ອງນ້ຳໜັກ ຫຼຸດ, ປອດອັກເສບ ແລະຕາຍໄດ້ ພະຍາດກາຝາກບາງຊະນິດຈາກໝູສາມາດຕິດແປດສູ່ຄົນໄດ້.



## 2. ພະຍາດແມ່ກາຝາກຂອງໝູທີ່ຕິດແປດມາສູ່ຄົນ

- ສາມາດຕິດເຊື້ອພະຍາດກາຝາກທີ່ເອີ້ນວ່າ: ພະຍາດລໍ ຊໍ (Trichinella) ຕົວແກ່ຂອງພະຍາດຈະອາໃສ່ຢູ່ໃນລຳໄສ້ໃນຂະນະທີ່ຕົວນາງຈະອາໃສຢູ່ໃນກ້າມຊີ້ນ. ພະຍາດນີ້ຈະບໍ່ເປັນອັນຕະລາຍຕໍ່ໝູ ສ່ວນສັດປະເພດອື່ນໆທີ່ກິນຊີ້ນໝູທີ່ເປັນພະຍາດນີ້ຈະບໍ່ສາມາດຕິດພະຍາດນີ້ໄດ້. ໝູທີ່ຕິດພະຍາດລໍຊໍ ໂດຍການກິນໝູທີ່ຕິດເຊື້ອພະຍາດນີ້ຢູ່. ນອກຈາກນີ້ຍັງສາມາດຕິດຈາກການກິນຊີ້ນໝູ (ຊີ້ນໝູດິບທີ່ຢູ່ໃນເສດອາຫານຂອງຄົນທີ່ນຳໄປໃຫ້ໝູກິນ) ດັ່ງນັ້ນ, ຊີ້ນໝູທີ່ຈະນຳໄປໃຫ້ໝູຕ້ອງສຸກກ່ອນ ການທີ່ຈະເຮັດໃຫ້ຊີ້ນໝູສຸກຈະຊ່ວຍຂ້າພະຍາດໄດ້. ຄົນເຮົາກໍ່ສາມາດຕິດເຊື້ອພະຍາດນີ້ຈາກການກິນຊີ້ນໝູດິບ .
- ຖ້າລ້ຽງໝູແບບປະປ່ອຍ ຈະເຮັດໃຫ້ໝູຕິດເຊື້ອພະຍາດໂຕແປຈາກຄົນ ໂດຍການກິນພຶດທີ່ປົນເປື້ອນອາຈົມຂອງຄົນ. ເມື່ອຄົນໄປກິນຊີ້ນໝູດິບ ຫຼືປຸງແຕ່ງອາຫານບໍ່ສຸກດີ ທີ່ມີພະຍາດດັ່ງກ່າວຄົນເຮົາກໍ່ສາມາດຕິດເຊື້ອພະຍາດໂຕແປໄດ້ຄືກັນ. ດັ່ງນັ້ນ, ບໍ່ຄວນລ້ຽງໝູແບບປະປ່ອຍຊະຊາຍ ແລະບໍ່ຄວນໃຫ້ເດັກນ້ອຍໄປຫຼິ້ນບ່ອນທີ່ມີຂີ້ໝູ.



## 3. ການຕິດເຊື້ອພະຍາດກາຝາກໂຕກົມໃນໝູ

ໝູສາມາດຕິດເຊື້ອພະຍາດແມ່ກາຝາກໄດ້ຫຼາຍຊະນິດ, ຄົນລ້ຽງໝູສາມາດເຫັນແມ່ທ້ອງໂຕກົມຍາວປະມານ 25 ຫາ 40 ຊມ ໃນອາຈົມຂອງໝູ. ໝູທີ່ມີອາຍຸ 2 ຫາ 5 ເດືອນ ເມື່ອໝູຕິດພະຍາດນີ້ຈະເຮັດໃຫ້ໝູຖອກທ້ອງ.

## 4. ການປິ່ນປົວ ແລະການປ້ອງກັນພະຍາດ

ໝູທີ່ຕິດເຊື້ອ ພະຍາດແມ່ກາຝາກໂຕກົມສາມາດປິ່ນປົວໄດ້ໂດຍໃຊ້ຢາທີ່ເໝາະສົມເຊັ່ນ: **ຢາປີເປີຣາຊີນ** ໝູກຳລັງຖືພາມານ ເຮົາຕ້ອງຂ້າແມ່ທ້ອງກ່ອນທີ່ໝູຈະອອກລູກເພື່ອປ້ອງກັນໝູນ້ອຍທີ່ຈະເກີດອອກມາຕິດແມ່ພະຍາດກາຝາກໂຕກົມຊຶ່ງສາມາດຕິດແປດໄດ້ໂດຍທາງນ້ຳນົມ. ແມ່ທ້ອງໂຕໜຶ່ງສາມາດປ່ອຍໄຂ່ນັບເປັນລ້ານໆໜ່ວຍຕໍ່ມື້ອອກມາທາງອາຈົມ ໄຂ່ຂອງແມ່ກາຝາກສາມາດຕິດແປດໄປສູ່ໝູໂຕອື່ນໆຄອກໝູທີ່ມີການລ້ຽງໝູຢູ່ຕະຫຼອດ ຫຼືຄອກໝູທີ່ລ້ຽງຊົ່ວຄາວຕ້ອງໄດ້ອະນາໄມໃຫ້ສະອາດຢູ່ສະເໝີເພື່ອປ້ອງກັນການເກີດພະຍາດແມ່ກາຝາກ.






Laos Extension for Agriculture Project
P.O. Box 9159
Vientiane, Lao P.D.R.
Tel/fax: 021 732 162 Mobile: 020 5526277
Email: leap@laoex.org
Email: cetdu@laoex.org



ກະຊວງກະສິກຳ ແລະ ປ່າໄມ້
ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ
ໜ່ວຍງານ ພັດທະນາຮູບແບບ ສົ່ງເສີມ ແລະ ຝຶກອົບຮົມ


# ຂໍ້ແນະນຳ

# ພະຍາດກາຝາກຂອງໝູ




ຈັດຕັ້ງປະຕິບັດໂດຍ: **CETDU**

(ໜ່ວຍງານພັດທະນາຮູບແບບ ສົ່ງສົມ ແລະ ຝຶກອົບ ຂັ້ນສູນກາງ)

ຮ່ວມກັບ:

ໂຄງການ ສົ່ງເສີມ ກະສິກຳ **(LEAP)**